# ຕາຕະລາງເງື່ອນໄຂໄດ້ຮັບຂອງສັນຊາດແລະການເຂົ້າເມືອງ

| ໂຄງການ | ຄົນສັນຊາດ ລື ພົລເມືອງ | ຄົນອາສັຍຢູ່ຖາວອນ ຖືກຕ້ອງຕາມກົດໝາຍ (ອາຍຸ 19 ປີ ຫລື ກາຍນັ້ນ) | ຄົນອາສັຍຢູ່ຖາວອນ ຖືກຕ້ອງຕາມກົດ ໝາຍ (ອາຍຸ ຕ່ຳກວ່າ 19 ປີ) | ຄົນອົພຍົບ, ຄົນລີ້ພັຍ, ຜູ້ເຄາະຮ້າຍຜູ້ເຂົ້າປະເທດ ດ້ວຍມະນຸດສະທັມ | ຄົນເຂົ້າເມືອງອາສັຍຢູ່ ຖືກຕ້ອງຕາມກົດໝາຍ | ຄົນເຂົ້າເມືອງບໍ່ມີເອກສານ |
|---|---|---|---|---|---|---|
| ເຄຣດິດພາສີຄ່າທຳ ນຽມປະກັນພັຍສຸຂະ ພາບ & ການລຸດຜ່ອນ ການຈ່າຍຮ່ວມກັນ | ✓ | ✓ | ✓ | ✓ | ✓ | — |
| Washington Apple Health ສຳລັບຜູ້ໃຫຍ່ (ອາຍຸ 19-64 ປີ) | ✓ | ✓[3] | NA | ✓[1] | —[2] | — |
| Washington Apple Health ສຳລັບຜູ້ຍິງຖື ພາ (ອາຍຸ 19-64 ປີ) | ✓ | ✓ | NA | ✓ | ✓ | ✓[4] |
| Washington Apple Health ສຳລັບເດັກນ້ອຍ (ອາຍຸ 1-18 ປີ) | ✓ | NA | ✓ | ✓ | ✓ | ✓[4] |
| ການພະຍາບານ ສຸກເສີນສຳລັບ ຄົນຕ່າງດ້າວ | — | ✓[5] | — | — | ✓ | ✓[4] |

✓ ມີເງື່ອນໄຂໄດ້ຮັບ — ບໍ່ມີເງື່ອນໄຂໄດ້ຮັບ **NA** ບໍ່ກ່ຽວຂ້ອງນຳ

1. ຄົນເຂົ້າເມືອງ "ມີສິດໄດ້ຮັບ" ອາສັຍຢູ່ຖືກຕ້ອງຕາມກົດໝາຍ: ຕ້ອງສອດຄ່ອງນຳການຫ້າມ 5 ປີນອກຈາກວ່າຖືກຍົກເວັ້ນ. (*) ຊີ້ບອກຍົກເວັ້ນຈາກການຫ້າມ 5 ປີ.
   - ຄົນອາສັຍຢູ່ຖາວອນຖືກຕ້ອງຕາມກົດໝາຍ (LPR) – ລວມທັງ:
     - *ລູກຊອດອະເມຣິກັນຜູ້ທີ່ເກີດ ມາຈາກ ສະມາຊິກຮັບໃຊ້ກອງທັບຄົນສັນຊາດ U.S. ຢູ່ SE ເອເຊັຽໃນຣະຫວ່າງ ສົງຄາມວຽດນາມ.
   - *ຄົນອົພຍົບ – ລວມທັງ:
     - *ຄົນມົ້ງ ແລະ ຄົນລາວຢູ່ດົນສູງ;
     - *ຄົນເຂົ້າເມືອງພິເສດຈາກປະເທດໄອແຣກ ຫລື ແອຟການິສຖານ; ແລະ
     - *ຜູ້ເຄາະຮ້າຍຂອງການຄ້າຄົນ
   - *ຄົນລີ້ພັຍ.
   - *ຄົນເຂົ້າມາຈາກຄິວບາ/ເຮຕຽນ.
   - *ບຸກຄົນທີ່ຖືກອະນຸມັດການກັກຕົວໄວ້ຈາກການເນຣະເທດ ຫລື ການເອົາອອກຈາກປະເທດ.
   - ຜູ້ພົ້ນໂທດກ່ອນກຳນົດ – ຖ້າຫາກວ່າຖືກອະນຸມັດໃຫ້ພົ້ນໂທດ ຢ່າງໜ້ອຍນຶ່ງປີ.
   - ຜົວເມັຽ/ເດັກນ້ອຍຜູ້ທີ່ຖືກຂົ່ມເຫັງບາງຄົນ – ລວມທັງຜູ້ທີ່:
     - ໃບແຈ້ງການ I-130 ຂອງການອະນຸມັດ "ປຣິມາ ພາຈິເ" ຂອງຄຳ ຟ້ອງຮ້ອງໂດຍຕົນເອງທີ່ຍັງໂຈະລໍຖ້າຢູ່ ຫລື ຖືກອະນຸມັດພາຍໃຕ້ ກົດໝາຍ Violence Against Women Act (VAWA).
   - ເຂົ້າປະເທດ U.S. ໃນຖານະຄົນເຂົ້າມາທີ່ມີເງື່ອນໄຂກ່ອນ ເດືອນເອໂປຣ 1, 1980.

- *ຄົນອາສັຍຢູ່ຖາວອນຖືກຕ້ອງຕາມກົດຫມາຍ, ຄົນພົ້ນໂທດກ່ອນກຳນົດ, ຫລື ຄົນຕ່າງດ້າວທີ່ຖືກທາຣຸນຜູ້ທີ່ເປັນສະມາຊິກຮັບໃຊ້ກອງທັບອິກຄືກັນ ຄົນສັນຊາດ U.S. ຢູ່
    - *ປະຈຳຫນ້າທີ່ຢູ່ໃນກອງທັບຂອງ US, ນອກຈາກປະຈຳຫນ້າທີ່ສຳລັບການຝຶກຝົນ;
    - *ນັກຮົບເກົ່າຂອງ US ຜູ້ທີ່ຖືກປົດປ່ອຍຢ່າງມີກຽດ;
    - *ນັກຮົບເກົ່າຂອງກອງທັບຂອງປະເທດ ຟີລິປິນຜູ້ທີ່ໄດ້ຮັບໃຊ້ກ່ອນວັນທີ 07/01/46;
    - *ຜົວເມັຽ, ແມ່ຫມ້າຍ ຫລື ພໍ່ຫມ້າຍ ຜູ້ທີ່ບໍ່ໄດ້ແຕ່ງງານໃຫມ່; ຫລື
    - *ເດັກນ້ອຍຫວັງເພິ່ງຂອງນັກຮົບເກົ່າ ຫລື ສະມາຊິກຂອງທະຫານປະຈຳການຜູ້ທີ່ບໍ່ໄດ້ແຕ່ງງານ.

ຫມາຍເຫດ: ການຫ້າມ 5 ປີ ບໍ່ກ່ຽວນຳບຸກຄົນຜູ້ທີ່ໄດ້ສະພາບ "ຄົນຕ່າງດ້າວມີສິດໄດ້ຮັບ" ພາຍໃນ 5 ປີຜ່ານມາ, ຖ້າຫາກວ່າເຂົາເຈົ້າເຂົ້າມາໃນ U.S. ກ່ອນວັນທີ 8/22/96 ແລະ ໄດ້ອາສັຍຢູ່ຢ່າງຕິດຕໍ່ເນື່ອງກັນຢູ່ໃນ U.S. ມາຕັ້ງແຕ່ວັນທີ 8/22/96. ເບິ່ງກົດຫມາຍ WAC 182-503-0535.

ຫມາຍເຫດ: ຣະຫັດໂຄດຂອງບັດຂຽວຊີ້ບອກວ່າຄົນ LPR ໄດ້ເຂົ້າມາໃນ US ແນວໃດ. ຖ້າຫາກວ່າບຸກຄົນໄດ້ເຂົ້າມາໃນ U.S. ພາຍໃຕ້ສະພາບ ທີ່ຖືກຍົກເວັ້ນຈາກການຫ້າມ 5 ປີ ແລະ ເຂົາເຈົ້າໄດ້ສະພາບ LPR ເປັນເວລາຕ່ຳກວ່າ 5 ປີ, ເຂົາເຈົ້າຍັງຖືກຍົກເວັ້ນຈາກການຫ້າມ 5 ປີຢູ່.

2. ຄົນເຂົ້າເມືອງ "ບໍ່ມີສິດໄດ້ຮັບ" ອາສັຍຢູ່ຖືກຕ້ອງຕາມກົດຫມາຍ:
ຄົນເຫລົ່ານີ້ບໍ່ແມ່ນປະຊາຊົນຜູ້ທີ່ອາສັຍຢູ່ຖືກຕ້ອງຕາມກົດ ຫມາຍຢູ່ໃນ U.S. ແລະ ບໍ່ຖືກລວມໃສ່ນຳຢູ່ໃນການຕີຄວາມຫມາຍຂອງຄົນຕ່າງດ້າວ ທີ່ມີສິດ ຜູ້ທີ່ຖືກບົ່ງ ຢູ່ຂ້າງເທິງນີ້. ຄົນຕ່າງດ້າວຜູ້ທີ່ບໍ່ມີສິດທົ່ວໄປລວມເອົາ:

- ປະຊາຊົນຂອງຄົນເກາະ Marshall Islands, Micronesia ຫລື Palau.
- ຄົນເຂົ້າເມືອງຜູ້ທີ່ພົ້ນໂທດກ່ອນກຳນົດເຂົ້າມາໃນ U.S. ເປັນເວລາ ຕ່ຳກວ່ານຶ່ງປີ.
- ຄົນເຂົ້າເມືອງຜູ້ທີ່ຖືກອະນຸມັດສະພາບປົກປ້ອງຊົ່ວຄາວ (TPS).
- ຜູ້ທີ່ບໍ່ແມ່ນຄົນເຂົ້າເມືອງຜູ້ທີ່ຖືກອະນຸຍາດໃຫ້ເຂົ້າມາໃນ U.S. ສຳລັບຈຸດປະສົງອັນເຈາະຈົງຕາມປົກກະຕິແລ້ວສຳລັບເວລາຈຳກັດ, ເຊັ່ນວ່າ:
    - ➢ ຄົນປັຽນປານທາງດ້ານການຄ້າ;
    - ➢ ນັກສຶກສາ; ແລະ
    - ➢ ນັກທ່ອງທ່ຽວ.
- ຄົນຕ່າງດ້າວທີ່ຖືກກົດຂີ່ຂົ່ມເຫັງຜູ້ທີ່ເປັນຍາດພີ່ນ້ອງຂອງປະຊາຊົນ U.S. ທີ່ມີຄຳຮ້ອງຂໍ I-130 ຖືກອະນຸມັດແລ້ວແຕ່ວ່າບໍ່ສອດຄ່ອງນຳກົດກຳນົດ ຂອງຄົນເຂົ້າເມືອງທີ່ຖືກທາຣຸນຢ່າງອື່ນໆ, ຕາມທີ່ຖືກບັນຣະຍາຍຢູ່ໃນ WAC 182-503-0530. ຄົນຕ່າງດ້າວທີ່ຖືກທາຣຸນຜູ້ທີ່ຍື່ນຄຳຟ້ອງ ຮ້ອງໂດຍຕົນເອງພາຍໃຕ້ VAWA ແຕ່ວ່າຍັງບໍ່ທັນໄດ້ຮັບ "ໃບແຈ້ງການ ຂອງເງື່ອນໄຂໄດ້ຮັບ"Prima Facie" ເທື່ອ, ຕາມທີ່ຖືກບັນຣະຍາຍຢູ່ ໃນກົດຫມາຍ WAC 182-503-0530.
- ຜູ້ຮ້ອງຂໍເອົາການດັດແປງຂອງສະພາບ, ຄົນລີ້ພັຍ, ການຍົກເລີກຂອງ ການເອົາອອກໄປ, ການໂຈະລໍຖ້າກ່ອນຂອງການເນຣະເທດ, ຫລື ການ ກັກເອົາໄວ້ຂອງການເນຣະເທດ ຫລື ການເອົາອອກໄປ.
- ການຍົກເວັ້ນຂອງການເອົາອອກໄປ, ການກະທຳເຍື້ອນອອກໄປ {*ດ້ວຍການຍົກເວັ້ນຂອງ Deferred Action Childhood Arrival (DACA)} ຫລື ການໂຈະໄວ້ກ່ອນຂອງການເນຣະເທດ ທີ່ຖືກອະນຸມັດ. (ຫມາຍເຫດ: ຖ້າຫາກວ່າບຸກຄົນໄດ້ຖືກອະນຸມັດການ ຍົກເລີກຂອງການເອົາອອກໄປ ຫລື ການໂຈະໄວ້ກ່ອນຂອງການເນຣະ ເທດໂດຍອີງຕາມຄຳຟ້ອງຮ້ອງທີ່ຖືກຍື່ນໂດຍຕົນເອງທີ່ຖືກອະນຸມັດໃຫ້ແລ້ວວ່າເປັນຄົນຕ່າງດ້າວທີ່ຖືກກົດຂີ່ຂົ່ມເຫັງ, ເຂົາເຈົ້າເປັນ "ຄົນຕ່າງດ້າວມີສິດໄດ້ຮັບ".)
- ການເດີນທາງທີ່ຖືກບັງຄັບເຍື້ອນໄປໄດ້ຖືກອະນຸມັດ.
- ການເຕົ້າໂຮມຄອບຄົວໄດ້ຖືກອະນຸມັດ.
- ສະພາບ"K", "S", "U" ຫລື "V" ຖືກແຕ່ງຕັ້ງໃນວິຊາຂອງຄົນໃດຄົນ ນຶ່ງ, ອະນຸຍາດໃຫ້ຜູ້ຖືທີ່ຈະເຮັດວຽກ ແລະ ໃນທີ່ສຸດ ທີ່ຈະດັດແປງມາເປັນສະ ພາບຄົນອາສັຍຢູ່ຖາວອນຖືກຕ້ອງຕາມກົດຫມາຍ (LPR).
- ຄົນອາສັຍຢູ່ຊົ່ວຄາວຖືກຕ້ອງຕາມກົດຫມາຍພາຍໃຕ້ໂຄງການອະພັຍໂທດ ຂອງກົດຫມາຍ Immigration Reform and control Act (IRCA), ລວມທັງຜູ້ທີ່ເຂົ້າມາພາຍໃຕ້ກົດຫມາຍ Sections 210 ("ພະນັກງານການກະສິກັມພິເສດ") ແລະ245A ຂອງ INA.
- ຄຳສັ່ງຂອງການໂຈະລໍຖ້າກ່ອນໄດ້ຖືກອະນຸມັດ.
- ມີເງື່ອນໄຂທີ່ຈະຍື່ນຄຳຟ້ອງຮ້ອງໃນຖານະເປັນເຍົາວະຊົນຄົນເຂົ້າເມືອງ ພິເສດ. ຄົນເຫລົ່ານີ້ແມ່ນເຍົາວະຊົນຜູ້ທີ່ໄດ້ຖືກກ່າວວ່າເປັນ "ຄົນຫວັງ ເພິ່ງຂອງຣັດ" ແລະ ມີເງື່ອນໄຂໄດ້ຮັບການເບິ່ງແຍງດູແລເດັກ ກຳພ້າ ຣະຍະຍາວ ຍ້ອນການກົດຂີ່ຂົ່ມເຫັງ, ການບໍ່ຫົວຊານຳ ຫລື ການປະຖິ້ມ.
- ການຢູ່ຂອງການເນຣະເທດ ຫລື ການເອົາອອກໄປໄດ້ຖືກອະນຸມັດໃຫ້.
- ການເດີນທາງຕາມສະມັກໃຈໄດ້ຖືກອະນຸມັດໃຫ້ - ເວລາມີຂອບເຂດ ຫລື ບໍ່ມີຂອບເຂດ.

*ບຸກຄົນທີ່ຖືກອະນຸມັດສະພາບ DACA ຈະບໍ່ມີເງື່ອນໄຂໄດ້ຮັບໂຄງການ Apple Health ທີ່ໄດ້ທຶນມາຈາກຣັດຖະບານກາງ ຫລື ມີເງື່ອນໄຂທີ່ ຈະຊື້ເອົາການຄຸ້ມກັນການປິ່ນປົວສຸຂະພາບໂດຍຜ່ານ QHP/HIPTC. ເຂົາເຈົ້າອາດຈະມີເງື່ອນໄຂໄດ້ຮັບໂຄງການຕໍ່ລົງໄປນີ້: Apple Health ທີ່ໄດ້ທຶນຈາກຣັດສຳລັບເດັກນ້ອຍ ແລະ ຜູ້ຍິງຖືພາ, ໂຄງການພະຍາບານ ສຸກເສີນສຳລັບຄົນຕ່າງດ້າວ, ແລະ ການບໍຣິການ ເດີຈາລ Care Services.

3. ຄົນອາສັຍຢູ່ຖາວອນຖືກຕ້ອງຕາມກົດຫມາຍຜູ້ໃຫຍ່ຜູ້ທີ່ເຂົ້າມາໃນ U.S. ຫລັງຈາກວັນທີ 8/22/1996 ຕ້ອງຢູ່ໃນສະພາບ LPR ເປັນເວລາຫ້າປີ ກ່ອນທີ່ເຂົາເຈົ້າຈະກາຍເປັນມີເງື່ອນໄຂໄດ້ຮັບການ ຄຸ້ມກັນຂອງຜູ້ໃຫຍ່ Washington Apple Health. ຣະຍະເວລາ ລໍຖ້າຫ້າປີຂອງຣັດຖະບານການອັນນີ້ບໍ່ກ່ຽວນຳໂຄງການ Washington Apple Health ສຳລັບຜູ້ຍິງຖືພາ ຫລື ໂຄງການ ພະຍາບານສຸກເສີນສຳລັບຄົນຕ່າງດ້າວ.

4. ໂຄງການ **Washington Apple Health** ແມ່ນໂຄງການ "ຄັນຮົ່ມ" ທີ່ຫ້ອມລ້ອມໂຄງການມາກມາຍຫລາຍໂຄງການສຳລັບປະ ຊາຊົນເຈາະຈົງສະເພາະ. ມັນສຳຄັນທີ່ຈະສັງເກດເຫັນວ່າໂຄງການ Washington Apple Health ບາງໂຄງການໄດ້ຖືກອອກເງິນ ທຶນໃຫ້ພາກສ່ວນນຶ່ງໂດຍຣັດຖະບານກາງ, ແລະ ບາງໂຄງການໄດ້ຖືກ ອອກເງິນ ທຶນໃຫ້ໂດຍຣັດວໍຊິງຕັນເທົ່ານັ້ນ.

5. ຄົນອາສັຍຢູ່ຖາວອນຖືກຕ້ອງຕາມກົດຫມາຍຜູ້ໃຫຍ່ທີ່ບໍ່ຖືພາຕັ້ງທ້ອງ ແລະ ຜູ້ທີ່ບໍ່ໄດ້ສອດຄ່ອງນຳຣະຍະເວລາລໍຖ້າຂອງຣັດຖະບານກາງ 5 ປີ ແລະ ບໍ່ໄດ້ຖືກຍົກເວັ້ນ, ອາດຈະມີເງື່ອນໄຂໄດ້ຮັບການພະຍາບານສຸກ ເສີນສຳລັບຄົນຕ່າງດ້າວຖ້າຫາກວ່າເຂົາເຈົ້າມີສະພາບພະຍາບານສຸກ ເສີນທີ່ມີສິດໄດ້ຮັບ.

ທຸກໆຄົນມີສິດທີ່ຈະໄດ້ຮັບຄວາມຊ່ວຍເຫລືອແລະຣາຍຣະອຽດຟຣີເປັນພາສາຂອງເຂົາເຈົ້າເອງ.ເພື່ອຈະເວົ້ານຳຄົນໃດຄົນນຶ່ງຟຣີໃນພາສາທີ່ທ່ານເຂົ້າໃຈ, ໂທຫາເລກ**1-855-923-4633**.ເພື່ອຣາຍຣະອຽດເພີ້ມເຕີມແວ່ເຂົ້າປັຽມ: www.wahbexchange.org/language-resources.